AEC Australian Electoral Commission

# ຈະເຮັດແນວໃດເພື່ອໃຫ້ຄະແນນຂອງທ່ານຖືກນັບ

ໃນມື້ເລືອກຕັ້ງທ່ານຈະໄດ້ຮັບເຈັ້ຍລົງຄະແນນສອງໃບ: **ໃບສີຂຽວ** ສຳລັບ ສະມາຊິກສະພາຕ່ຳ ແລະ **ໃບສີຂາວ** ແມ່ນສຳລັບ ສະມາຊິກສະພາສູງ.

## ສະມາຊິກສະພາຕ່ຳ

ຢູ່ເທິງ**ເຈັ້ຍລົງຄະແນນສີຂຽວ** ທ່ານຕ້ອງໝາຍເລກ '1' ໃສ່ຢູ່ໃນປ່ອງທີ່ຢູ່ຂ້າງຊື່ຂອງຜູ້ລົງສມັກເລືອກຕັ້ງ ທີ່ທ່ານມັກເປັນອັນດັບທີນຶ່ງ, ໝາຍເລກ '2' ໃສ່ຢູ່ໃນປ່ອງທີ່ຢູ່ຂ້າງຊື່ທີ່ທ່ານມັກທີສອງ ແລະ ຕໍ່ໆໄປ, ຈົນກວ່າ ທ່ານຈະໄດ້ໃສ່ໝາຍເລກຈົນຄົບທຸກໆປ່ອງ.

ທ່ານຕ້ອງໝາຍເລກໃສ່**ໝົດທຸກປ່ອງ** ເພື່ອໃຫ້ຄະແນນຂອງທ່ານຖືກນັບ.




ຕົວຢ່າງເຈັ້ຍລົງຄະແນນ

## ສະມາຊິກສະພາສູງ

ຢູ່ເທິງ**ເຈັ້ຍລົງຄະແນນສີຂາວ** ທ່ານສາມາດເລືອກການລົງຄະແນນໄດ້ສອງທາງ ຄື ຢູ່ຂ້າງເທິງເສັ້ນ ຫຼື ຢູ່ຂ້າງລຸ່ມເສັ້ນ.




### ເລືອກເອົາ ຢູ່ຂ້າງເທິງເສັ້ນ

ຖ້າທ່ານເລືອກ ວ່າຈະລົງຄະແນນຢູ່ຂ້າງເທິງເສັ້ນ, **ທ່ານຕ້ອງໝາຍເລກໃສ່ 6 ປ່ອງເປັນຢ່າງຕ່ຳ** ຈາກ 1 ຫາ 6.

ໝາຍເລກ '1' ໃສ່ຢູ່ໃນປ່ອງທີ່ມີຊື່ພັກຫຼືກຸ່ມທີ່ທ່ານມັກເປັນອັນດັບທີນຶ່ງ, ໝາຍເລກ '2' ໃສ່ຢູ່ໃນປ່ອງທີ່ ມີ ຊື່ພັກ ຫຼື ກຸ່ມທີ່ທ່ານມັກທີສອງ ແລະຕໍ່ໆໄປຈົນກວ່າທ່ານຈະໄດ້ໝາຍເລກໃສ່ຢ່າງຕ່ຳຫົກປ່ອງ ຢູ່ຂ້າງເທິງເສັ້ນ. ທ່ານສາມາດສືບຕໍ່ໝາຍເລກໃສ່ໃນປ່ອງຢູ່ຂ້າງເທິງເສັ້ນຫຼາຍເທົ່າທີ່ທ່ານຕ້ອງການ.




ຕົວຢ່າງເຈັ້ຍລົງຄະແນນ

### ຫຼື ຢູ່ຂ້າງລຸ່ມເສັ້ນ

ຖ້າທ່ານເລືອກ ການລົງຄະແນນຢູ່ຂ້າງລຸ່ມເສັ້ນ, **ທ່ານຕ້ອງໝາຍເລກໃສ່ 12 ປ່ອງເປັນຢ່າງຕ່ຳ** ຈາກ 1 ຫາ 12.

ໝາຍເລກ '1' ໃສ່ຢູ່ໃນປ່ອງທີ່ຢູ່ຂ້າງຊື່ຂອງຜູ້ລົງສມັກເລືອກຕັ້ງທີ່ທ່ານມັກເປັນອັນດັບທີນຶ່ງ ໝາຍເລກ '2' ໃສ່ໃນປ່ອງຂ້າງຊື່ຂອງຜູ້ທີ່ທ່ານມັກ ທີສອງ ແລະ ຕໍ່ໆໄປຈົນໄປເຖິງໝາຍເລກ 12 ເປັນຢ່າງຕ່ຳ. ທ່ານສາມາດສືບຕໍ່ໝາຍເລກໃສ່ໃນປ່ອງຢູ່ຂ້າງລຸ່ມເສັ້ນຫຼາຍເທົ່າທີ່ທ່ານຕ້ອງການ.

**ຢ່າເປັນຫ່ວງຖ້າທ່ານເຮັດຜິດ.**
ທ່ານສາມາດຂໍເອົາເຈັ້ຍລົງຄະແນນໃບໃໝ່ ແລະ ເລີ່ມຕົ້ນຂຽນໃໝ່ອີກ.



Authorised by the Electoral Commissioner, Canberra